ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****************************************

ສຳນັກງານນາຍົກລັດຖະມົນຕີ ເລກທີ່ 97 /ນຍ

ນະຄອນຫລວງວຽງຈັນ, ວັນທີ່ 22.03.2007.

# ດຳລັດ
# ວ່າດ້ວຍການສ້າງຕັ້ງສຳນັກງານ
# ກົງສຸນກິດຕິມະສັກຂອງຕ່າງປະເທດຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003;
- ອີງຕາມສົນທິສັນຍາວຽງນ ວ່າດ້ວຍການພົວພັນທາງການກົງສຸນສະບັບລົງວັນທີ່ 24 ເມສາ 1963;
- ເພື່ອປະຕິບັດແນວທາງນະໂຍບາຍເປີດກວ້າງການພົວພັນ ແລະ ການຮ່ວມມືກັບຕ່າງປະເທດຂອງພັກ ແລະ ລັດຖະບານ ແຫ່ງ ສປປ ລາວ;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດສະບັບເລກທີ່ 0387/ຕປທ. ກກສ.1, ລົງວັນທີ່ 19 ມັງກອນ 2007;

## ນາຍົກລັດຖະມົນຕີອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ1. ຈຸດປະສົງ**

ດຳລັດສະບັບນີ້ວາງອອກເພື່ອກຳນົດບັນດາຫລັກການ, ລະບຽບການ, ຂັ້ນຕອນ, ເງື່ອນໄຂ ໃນການສ້າງຕັ້ງສຳນັກງານ ແລະ ແຕ່ງຕັ້ງພະນັກງານກົງສຸນກິດຕິມະສັກ, ຂອບເຂດການເຄື່ອນໄຫວຂອງສຳນັກງານກົງສຸນກິດຕິມະສັກ, ຄວາມສະດວກ, ອະພິສິດ ແລະ ການຄຸ້ມກັນຂອງພະນັກງານກົງສຸນກິດຕິມະສັກຂອງຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 2. ສຳນັກງານກົງສຸນກິດຕິມະສັກ**

ສຳນັກງານກົງສຸນກິດຕິມະສັກ ແມ່ນສະຖານກົງສຸນ ຫລືສະຖານຮອງກົງສຸນ ຫລືສຳນັກງານຕົວແທນກົງສຸນຂອງຕ່າງປະເທດປະຈຳຢູ່ ສປປ ລາວ ຊຶ່ງແມ່ນກົງສຸນກິດຕິມະສັກເປັນຜູ້ຄຸ້ມຄອງ ແລະ ເປັນຕົວແທນ .

**ມາດຕາ 3. ນິຍາມຄຳສັບ**

ຕາມດຳລັດສະບັບນີ້ເພື່ອຄວາມເຂົ້າໃຈໄດ້ຈຳກັດຄວາມຫມາຍຂອງບັນດາຄຳສັບໄວ້ດັ່ງນີ້:

3.1 ຄຳວ່າ "ຂອບເຂດການເຄື່ອນໄຫວກົງສຸນ" ຫມາຍເຖິງອານາເຂດ ທີ່ສຳນັກງານກົງສຸນກິດຕິມະສັກໄດ້ຮັບອະນຸຍາດໃຫ້ປະຕິບັດຫນ້າທີ່ການກົງສຸນ.

3.2 ຄຳວ່າ "ຫົວຫນ້າສຳນັກງານກົງສຸນກິດຕິມະສັກ" ຫມາຍເຖິງບຸກຄົນຢູ່ ສປປ ລາວ (ລັດທີ່ຮັບ) ຊຶ່ງຖືກແຕ່ງຕັ້ງຈາກລັດທີ່ສົ່ງໃຫ້ປະຕິບັດຫນ້າທີ່ເປັນຫົວຫນ້າຂອງສຳນັກງານກົງສຸນກິດຕິມະສັກ.

3.3 ຄຳວ່າ "ພະນັກງານກົງສຸນກິດຕິມະສັກ" ຫມາຍເຖິງຫົວຫນ້າສຳນັກງານກົງສຸນກິດຕິມະສັກ ແລະ ບຸກຄົນທີ່ຖືກມອບຫມາຍໃຫ້ປະຕິບັດຫນ້າທີ່ກົງສຸນກິດຕິມະສັກ.

3.4 ຄຳວ່າ"ສະຫມຽນກົງສຸນກິດຕິມະສັກ" ຫມາຍເຖິງທຸກໆບຸກຄົນທີ່ຮັບໃຊ້ໃນພະແນກບໍລິຫານ ແລະເຕັກນິກຂອງສຳນັກງານກົງສຸນກິດຕິມະສັກ.

3.5 ຄຳວ່າ "ຄົນຮັບໃຊ້ກົງສຸນກິດຕິມະສັກ" ຫມາຍເຖິງທຸກໆບຸກຄົນ ທີ່ຮັບໃຊ້ວຽກພາຍໃນບ້ານເຮືອນຂອງສຳນັກງານກົງສຸນກິດຕິມະສັກ.

3.6 ຄຳວ່າ "ສະມາຊິກສຳນັກງານກົງສຸນກິດຕິມະສັກ" ຫມາຍເຖິງພະນັກງານກົງສຸນກິດຕິມະສັກ, ສະຫມຽນກົງສຸນກິດຕິມະສັກ ແລະ ຄົນຮັບໃຊ້ກົງສຸນກິດຕິມະສັກ.

3.7 ຄຳວ່າ "ສະຖານທີ່ກົງສຸນກິດຕິມະສັກ" ຫມາຍເຖິງເຮືອນ ຫລືພາກສ່ວນຂອງເຮືອນ ແລະເດີ່ນທີ່ຕິດກັບເຮືອນດັ່ງກ່າວ, ຊຶ່ງເປັນກຳມະສິດຂອງບຸກຄົນໃດກໍ່ຕາມທີ່ໃຊ້ເປັນສຳນັກງານກົງສຸນກິດຕິມະສັກໂດຍສະເພາະ.

3.8 ຄຳວ່າ "ບັນນະສານກົງສຸນກິດຕິມະສັກ" ຫມາຍເຖິງທຸກເຈັ້ຍທາງການ, ທຸກໆເອກະສານ, ຈົດຫມາຍ, ປຶ້ມອ່ານ, ຟິມຮູບເງົາ, ປຶ້ມບັນທຶກຂອງສຳນັກງານກົງສຸນກິດຕິມະສັກ, ອຸປະກອນຮັບສົ່ງສານທາງກົດລັບ, ອຸປະກອນເອເລັກໂຕຼນິກບັນທຶກພາບ ແລະສຽງ, ບັດທະບຽນ, ຕູ້ທີ່ເກັບມ້ຽນ ແລະຮັກສາເຄື່ອງຂອງດັ່ງກ່າວ.

**ມາດຕາ 4. ຫລັກການທີ່ພົວພັນເຖິງສຳນັກງານ ແລະພະນັກງານກົງສຸນກິດຕິມະສັກ**

ຫລັກການທີ່ພົວພັນເຖິງບັນດາສຳນັກງານ ແລະ ບັນດາພະນັກງານກົງສຸນກິດຕິມະສັກໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະໃນຫມວດ 3 ແຫ່ງ ສົນທິສັນຍາວຽນນາວ່າດ້ວຍການພົວພັນກົງສຸນທີ່ໄດ້ຮັບການລົງນາມໃນວັນທີ່ 22 ເມສາ 1963 ແລະມີຜົນບັງຄັບໃຊ້ໃນວັນທີ່ 19 ມີນາ 1967.

ປະເທດລາວເຂົ້າເປັນພາຄີຂອງສົນທິສັນຍາດັ່ງກ່າວໃນວັນທີ່ 09 ສິງຫາ 1973 ແລະມີຜົນບັງຄັບໃຊ້ໃນລາວໃນວັນທີ່ 08 ກັນຍາ 1973.

**ມາດຕາ 5. ຫລັກການສະເຫມີພາບ**

ລັດຖະບານ ແຫ່ງ ສປປ ລາວອາດໃຫ້ອະພິສິດ ແລະການຄຸ້ມກັນແກ່ບັນດາພະນັກງານກົງສຸນກິດຕິມະສັກຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ ແລະໃນຫມວດ 3 ຂອງສົນທິສັນຍາ ແຫ່ງ ກຸງວຽນວ່າດ້ວຍການພົວພັນທາງການກົງສຸນສະບັບລົງວັນທີ່ 22 ເມສາ 1963 ບົນພື້ນຖານການປະຕິບັດຕາມຫລັກການສະເຫມີພາບ (the principle of reciprocity) ລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານຂອງລັດທີ່ສົ່ງ.

**ມາດຕາ 6. ຫລັກການສ້າງຕັ້ງສໍານັກງານກົງສຸນກິດຕິມະສັກ**

6.1 ການສ້າງຕັ້ງສໍານັກງານກົງສຸນກິດຕິມະສັກຂອງຕ່າງປະເທດຢູ່ ສປປ ລາວ ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກລັດຖະບານ ແຫ່ງ ສປປ ລາວ.

6.2 ລັດທີ່ສົ່ງທີ່ມີສໍານັກງານການທູດຕັ້ງຢູ່ນະຄອນຫລວງວຽງຈັນອາດໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສ ປປ ລາວ ໃຫ້ສ້າງຕັ້ງສໍານັກງານກົງສຸນກິດຕິມະສັກຢູ່ເມືອງຫລວງພະບາງ(ແຂວງຫລວງພະບາງ), ເມືອງໄກສອນພົມວິຫານ(ແຂວງສະຫວັນນະເຂດ) ແລະ ເມືອງປາກເຊ(ແຂວງຈໍາປາສັກ).

6.3 ລັດທີ່ສົ່ງທີ່ບໍ່ມີສໍານັກງານການທູດຕັ້ງຢູ່ ສ ປປລາວ ອາດໄດ້ຮັບອະນຸຍາດໃຫ້ສ້າງຕັ້ງສໍານັກງານກົງສຸນກິດຕິມະສັກຢູ່ຂອບເຂດນະຄອນຫລວງວຽງຈັນເທົ່ານັ້ນ.

**ມາດຕາ 7. ຂອບເຂດການເຄື່ອນໄຫວຂອງສໍານັກງານກົງສຸນກິຕິມະສັກ**

7.1 ຂອບເຂດການເຄື່ອນໄຫວຂອງສໍານັກງານກົງສຸນກິດຕິມະສັກ ອາດກວມເອົາຂອບເຂດຫນຶ່ງຕົວເມືອງ ຫລືຫນຶ່ງແຂວງ, ຫລືຫລາຍແຂວງ, ຫລືພາກ, ຫລືກວມເອົາທັງຫມົດດິນແດນຂອງ ສປປ ລາວ, ແຕ່ຂອບເຂດການເຄື່ອນໄຫວດັ່ງກ່າວ ຈະຕ້ອງບໍ່ຊໍ້າຊ້ອນກັບຂອບເຂດການເຄື່ອນໄຫວຂອງສໍານັກງານກົງສຸນກິດຕິມະສັກອື່ນໆ ຂອງລັດທີ່ສົ່ງ.

7.2 ການປ່ຽນທີ່ຕັ້ງ ຫລື ປ່ຽນຂອບເຂດການເຄື່ອນໄຫວຂອງສໍານັກງານກົງສຸນກິດຕິມະສັກຕ້ອງໄດ້ຮັບການເຫັນດີຈາກລັດຖະບານ ແຫ່ງ ສປປ ລາວ. ໃນກໍລະນີພິເສດ ຫລືຈໍາເປັນໃດຫນຶ່ງ ໂດຍໄດ້ຮັບການຕົກລົງເຫັນດີຈາກລັດຖະບານ ແຫ່ງ ສປປ ລາວ, ສໍານັກງານກົງສຸນກິດຕິມະສັກ ອາດປະຕິບັດຫນ້າທີ່ນອກຂອບເຂດການເຄື່ອນໄຫວຂອງຕົນ, ແຕ່ການປະຕິບັດຫນ້າທີ່ດັ່ງກ່າວ ຈະຕ້ອງບໍ່ສົ່ງຜົນກະທົບຕໍ່ຂອບເຂດການເຄື່ອນໄຫວຂອງສໍານັກງານການທູດ ຫລືຂອງສໍານັກງານກົງສຸນອາຊີບຂອງລັດທີ່ສົ່ງ ຊຶ່ງມີຂອບເຂດການເຄື່ອນໄຫວກວ້າງຂວາງກວ່າຕົນ.

**ມາດຕາ 8. ຫລັກການອອກໜັງສືຮັບຮອງກົງສຸນໃຫ້ແກ່ພະນັກງານກົງສຸນກິດຕິມະສັກ**

8.1 ລັດຖະບານ ແຫ່ງ ສປປ ລາວ ອອກໜັງສືຮັບຮອງແກ່ການແຕ່ງຕັ້ງພະນັກງານກົງສຸນກິດຕິມະສັກຂອງຕ່າງປະເທດຢູ່ ສປປ ລາວ ໃນຖານະກົງສຸນກິດຕິມະສັກ, ຮອງກົງສຸນກິດຕິມະສັກ ແລະ ຕົວແທນກົງສຸນກິດຕິມະສັກເທົ່ານັ້ນ.

8.2 ລັດຖະບານ ແຫ່ງ ສປປ ລາວ ອະນຸຍາດໃຫ້ມີພະນັກງານກົງສຸນກິດຕິມະສັກບໍ່ເກີນ2ຄົນປະຈຳຢູ່ສຳນັກງານກົງສຸນກິດຕິມະສັກດຽວກັນ.

8.3 ລັດຖະບານ ແຫ່ງ ສປປ ລາວ ມີສິດປະຕິເສດໃນການອອກໜັງສືຮັບຮອງ ແລະຖອນໜັງສືຮັບຮອງເວລາໃດກໍ່ໄດ້ໂດຍບໍ່ຈຳເປັນອະທິບາຍເຫດຜົນ.

## ໝວດທີ II
## ເຫດຜົນ ແລະຄວາມຈຳເປັນສະເໜີສ້າງຕັ້ງສຳນັກງານ ກົງສຸນກິດຕິມະສັກ ແລະເງື່ອນໄຂຂອງພະນັກງານກົງສຸນກິດຕິມະສັກ

### ມາດຕາ 9. ເຫດຜົນການສະເໜີສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ

ລັດທີ່ສົ່ງຕ້ອງແຈ້ງເຫດຜົນທີ່ຈຳເປັນ ໃນການສະເໜີຕັ້ງສຳນັກງານກົງສຸນກິດຕິມະສັກ, ໃນນັ້ນຕ້ອງສະໜອງຂໍ້ມູນຈຳນວນພົນລະເມືອງຂອງລັດທີ່ສົ່ງ ທີ່ອາໄສຢູ່ໃນຂອບເຂດການເຄື່ອນໄຫວຂອງສຳນັກງານກົງສຸນກິດຕິມະສັກທີ່ສະເໜີສ້າງຕັ້ງນັ້ນ, ຄວາມຮຽກຮ້ອງຕ້ອງການໃນການຈະອອກໜັງສືຜ່ານແດນ ແລະ ວິຊາລວມທັງຄວາມເປັນໄປໄດ້ໃນການສົ່ງເສີມການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ວິທະຍາສາດ, ທ່ອງທ່ຽວ, ການແລກປ່ຽນວັດທະນະທຳ ແລະ ອື່ນໆລະຫວ່າງຂອບເຂດການເຄື່ອນໄຫວກົງສຸນກັບລັດທີ່ສົ່ງ.

### ມາດຕາ 10. ເງື່ອນໄຂຂອງພະນັກງານກົງສຸນກິດຕິມະສັກ

ພະນັກງານກົງສຸນກິດຕິມະສັກຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

10.1 ເປັນຄົນສັນຊາດລາວ ຫລືຄົນສັນຊາດຂອງລັດທີ່ສົ່ງ ຊຶ່ງມີພູມລຳເນົາຖາວອນຢູ່ ສປປ ລາວ;

10.2 ເປັນຄົນທີ່ມີບົດບາດ ແລະຊື່ສຽງໃນສັງຄົມ, ມີຖານະທາງດ້ານການເງິນ ແລະມີຄວາມສຳພັນຢ່າງໃກ້ຊິດເປັນເວລາຍາວນານພໍສົມຄວນກັບລັດທີ່ສົ່ງ;

10.3 ໄດ້ດຳລົງຊີວິດຢູ່ສະຖານທີ່ງສະເໜີຕັ້ງສຳນັກງານກົງສຸນກິດຕິມະສັກ ຫລືຢູ່ໃນຂອບເຂດການເຄື່ອນໄຫວກົງສຸນກິດຕິມະສັກເປັນໄລຍະຍາວນານພໍສົມຄວນ ແລະມີສະຖານທີ່ພັກເຊົາບໍ່ໄກຈາກທີ່ຕັ້ງສຳນັກງານກົງສຸນກິດຕິມະສັກ;

10.4 ມີອາຍຸ 35 ປີ ຂຶ້ນໄປ, ແຕ່ບໍ່ເກີນ 65 ປີ ໃນເວລາແຕ່ງຕັ້ງ;

10.5 ບໍ່ແມ່ນສະມາຊິກສະພາແຫ່ງຊາດ ຫລືພະນັກງານໃນອົງການຕຸລາການ ຫລືລັດຖະກອນຂອງສປປ ລາວ. ສຳລັບຄົນລາວທີ່ເຄີຍຮັບໃຊ້ໃນຂະແໜງການປ້ອງກັນປະເທດ ຫລືປ້ອງ

ກັບຄວາມສະຫງົບ ຫລືກ່ຽວຂ້ອງກັບຄວາມໝັ້ນຄົງຂອງຊາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ຕົນເຄີຍຮັບໃຊ້ມາກ່ອນ;

10.6 ເປັນຄົນທີ່ມີປະຫວັດຈະແຈ້ງ(ບໍ່ມີຄະດີອາຍາ);

10.7 ບໍ່ເປັນຄົນທີ່ຖືກປະກາດລົ້ມລະລາຍ;

10.8 ບໍ່ໄດ້ເປັນກົງສຸນກິດຕິມະສັກຂອງປະເທດທີ່ 3 ຢູ່ ສປປ ລາວ ໃນເວລາດຽວກັນ; ແລະ

10.9 ຂຶ້ນກັບລັດຖະບານ ແຫ່ງ ສປປ ລາວ ຈະກຳນົດໃນແຕ່ລະໄລຍະເມື່ອພິຈາລະນາເຫັນວ່າມີຄວາມຈຳເປັນ ແລະ ເໝາະສົມ.

## ໝວດທີ III
## ຂັ້ນຕອນການສະເໜີ ແລະ ພິຈາລະນາສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ

### ມາດຕາ 11. ຂັ້ນຕອນສະເໜີສ້າງຕັ້ງ

ລັດທີ່ສົ່ງຕ້ອງສົ່ງຈົດໝາຍແຈ້ງຈຸດປະສົງ ສະເໜີສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ ໂດຍກຳນົດຈຸດທີ່ຕັ້ງ ແລະຂອບເຂດການເຄື່ອນໄຫວຢ່າງຈະແຈ້ງ ພ້ອມທັງສະເໜີຊື່ ແລະຊີວະປະຫວັດຂອງບຸກຄົນທີ່ສະເໜີເປັນພະນັກງານກົງສຸນກິດຕິມະສັກໃຫ້ກະຊວງການຕ່າງປະເທດ(ກົມກົງສຸນ) ລາຍລະອຽດລຸ່ມນີ້:

11.1 ຊີວະປະຫວັດ:

1. ຊື່ ແລະ ນາມສະກຸນ;
2. ວັນເດືອນປີເກີດ;
3. ສະຖານທີ່ເກີດ;
4. ສັນຊາດ (ເຊື້ອຊາດກຳເນີດ ແລະສັນຊາດປະຈຸບັນ);
5. ລະດັບການສຶກສາ;
6. ພາສາຕ່າງປະເທດທີ່ເວົ້າໄດ້;
7. ທີ່ຢູ່(ສະຖານທີ່ພັກເຊົາ ແລະບ່ອນເຮັດວຽກໃນປະຈຸບັນ);
8. ຊື່ບໍລິສັດທີ່ຜູ້ກ່ຽວເຮັດວຽກ, ວັນເດືອນປີບໍລິສັດດັ່ງກ່າວຖືກສ້າງຕັ້ງ, ວັນເດືອນປີເຂົ້າເຮັດວຽກ ແລະຕຳແໜ່ງໜ້າທີ່ໃນບໍລິສັດດັ່ງກ່າວ;
9. ບົດຮຽນ ແລະປະສົບການໃນການປະຕິບັດວຽກງານ.

11.2 ສະໜອງຂໍ້ມູນໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ "ກ"

### ມາດຕາ12. ການພິຈາລະນາ

12.1 ລັດຖະບານແຫ່ງ ສປປ ລາວ ຈະອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງທາງດ້ານວຽກງານກົງສຸນ ແລະ ທ່າແຮງໃນການສົ່ງເສີມການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການ

ທ່ອງທ່ຽວ, ວິທະຍາສາດເຕັກນິກ, ແລກປ່ຽນວັດທະນາທຳ ແລະອື່ນໆລະຫວ່າງຂອບເຂດການເຄື່ອນໄຫວກົງສຸນກັບລັດທີ່ສົ່ງກໍ່ຄືຄຸນສົມບັດຂອງບຸກຄົນ ທີ່ຖືກສະເໜີເປັນພະນັກງານກົງສຸນກິດຕິມະສັກ ເປັນພື້ນຖານໃນການພິຈາລະນາການສະເໜີສ້າງຕັ້ງສຳນັກງານກົງສຸນກິດຕິມະສັກ.

12.2 ໃນກໍລະນີການສະເໜີສ້າງຕັ້ງສຳນັກງານ ແລະ ພະນັກງານກົງສຸນກິດຕິມະສັກໄດ້ຮັບການຕົກລົງເຫັນດີທາງດ້ານຫລັກການຈາກລັດຖະບານແຫ່ງ ສປປ ລາວ, ກະຊວງການຕ່າງປະເທດ(ກົມກົງສຸນ) ແຫ່ງ ສປປ ລາວ ຈະແຈ້ງການຕົກລົງເຫັນດີດັ່ງກ່າວໃຫ້ລັດທີ່ສົ່ງຊາບຜ່ານສາຍທາງການທູດ.

**ມາດຕາ 13. ການອອກໜັງສືຮັບຮອງກົງສຸນ(Exequatur)**

13.1 ລັດທີ່ສົ່ງຕ້ອງສົ່ງຈົດໝາຍເຖິງກະຊວງການຕ່າງປະເທດ(ກົມກົງສຸນ) ແຫ່ງ ສປປ ລາວ ເພື່ອສະເໜີພິຈາລະນາອອກໜັງສືຮັບຮອງ (Exequatur) ຕໍ່ການແຕ່ງຕັ້ງຫົວໜ້າສຳນັກງານກົງສຸນກິດຕິມະສັກ.

13.2 ຫລັງຈາກລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ອອກໜັງສືຮັບຮອງຕໍ່ການແຕ່ງຕັ້ງຫົວໜ້າກົງສຸນກິດຕິມະສັກເປັນທີ່ຮຽບຮ້ອຍແລ້ວ, ກະຊວງການຕ່າງປະເທດ(ກົມກົງສຸນ) ຈະສົ່ງໜັງສືຮັບຮອງ (Exequatur) ໃຫ້ລັດທີ່ສົ່ງຜ່ານສາຍທາງການທູດ.

**ມາດຕາ14. ການເລີ່ມປະຕິບັດໜ້າທີ່**

14.1 ພາຍຫລັງໄດ້ຮັບໜັງສືຮັບຮອງ ລັດທີ່ສົ່ງຕ້ອງແຈ້ງໃຫ້ຫົວໜ້າສຳນັກງານກົງສຸນກິດຕິມະສັກປະກອບຄຳຮ້ອງເລີ່ມຕົ້ນເຮັດວຽກ(Commencement Form) ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ຂ ພ້ອມຮູບ 2 ແຜ່ນ. ຫລັງຈາກນັ້ນ, ລັດທີ່ສົ່ງຕ້ອງສົ່ງຈົດໝາຍພ້ອມຄຳຮ້ອງອັນຄົບຖ້ວນໃຫ້ກະຊວງການຕ່າງປະເທດ(ກົມພິທີການທູດ) ເພື່ອອອກບັດປະຈຳຕົວໃຫ້ຜູ້ກ່ຽວ.

14.2 ຫົວໜ້າສຳນັກງານກົງສຸນກິດຕິມະສັກ ຈະບໍ່ມີສິດປະຕິບັດໜ້າທີ່ການກົງສຸນຈົນກວ່າຈະໄດ້ຮັບໜັງສືຮັບຮອງ (Exequatur) ທີ່ອອກໃຫ້ໂດຍລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງ ສປປ ລາວ.

## ໝວດທີ IV
## ສິດຂອບເຂດການເຄື່ອນໄຫວ, ການອຳນວຍຄວາມສະດວກ, ອະພິສິດ, ການຄຸ້ມກັນ ແລະການສິ້ນສຸດໜ້າທີ່

**ມາດຕາ15. ສິດຂອບເຂດໃນການເຄື່ອນໄຫວ**

15.1 ໃນການປະຕິບັດໜ້າທີ່ການກົງສຸນ, ສຳນັກງານກົງສຸນກິດຕິມະສັກມີສິດ:

ກ. ຕິດຕໍ່ປະສານງານ ແລະ ເຮັດວຽກກັບເຈົ້າໜ້າທີ່ທ້ອງຖິ່ນໃນຂອບເຂດການເຄື່ອນໄຫວກົງສຸນຂອງຕົນ;

ຂ. ຕິດຕໍ່, ພົບປະ ແລະເຮັດວຽກກັບເຈົ້າໜ້າທີ່ຂັ້ນສູນກາງຂອງ ສປປ ລາວ ໂດຍຜ່ານສຳນັກງານການທູດຂອງລັດທີ່ສົ່ງປະຈຳຢູ່ ສປປ ລາວ(ຖ້າມີ). ໃນກໍລະນີບໍ່ມີສຳນັກງານການທູດຂອງລັດທີ່ສົ່ງປະຈຳຢູ່ ສປປ ລາວ, ສຳນັກງານກົງສຸນກິດຕິມະສັກຕ້ອງປະສານຜ່ານກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ເພື່ອຕິດຕໍ່ລ່ວງໜ້າ.

15.2 ໃນກໍລະນີສຳນັກງານກົງສຸນກິດຕິມະສັກມີຈຸດປະສົງຈັດງານທາງດ້ານພິທີການເຊັ່ນ: ງານລ້ຽງ, ສາຍຮູບເງົາ ແລະ ອື່ນໆ, ໂດຍເຊີນຝ່າຍລາວເຂົ້າຮ່ວມ ຕ້ອງໄດ້ແຈ້ງໃຫ້ຫ້ອງການພົວພັນຕ່າງປະເທດແຂວງ ຫລືຫ້ອງວ່າການປົກຄອງແຂວງໃນຂອບເຂດການເຄື່ອນໄຫວກົງສຸນຂອງຕົນຊາບລ່ວງໜ້າ 7 ວັນເພື່ອພິຈາລະນາຕົກລົງ. ສຳລັບສຳນັກງານກົງສຸນກິດຕິມະສັກ ທີ່ຕັ້ງຢູ່ນະຄອນຫລວງວຽງຈັນໃຫ້ສະເໜີໄປຍັງກົມພິທີການທູດກະຊວງການຕ່າງປະເທດເພື່ອພິຈາລະນາ.

15.3 ໃນກໍລະນີມີຄວາມຕ້ອງການຄັດເລືອກພະນັກງານຊ່ວຍວຽກ, ບ່ອນທາສະຖານທີ່, ເຮືອນ, ໄຟຟ້າ, ນ້ຳ ແລະ ການບໍລິການອື່ນໆທີ່ຄ້າຍຄືກັນ ຊຶ່ງມີສ່ວນພົວພັນກັບການເຄື່ອນໄຫວປະຕິບັດໜ້າທີ່ການກົງສຸນ, ສຳນັກງານກົງສຸນກິດຕິມະສັກມີສິດຕິດຕໍ່ພົວພັນກັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງຝ່າຍລາວໃນຂອບເຂດການເຄື່ອນໄຫວຂອງຕົນເພື່ອແກ້ໄຂຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 16. ການນຳໃຊ້ພາຫະນະຕິດຕໍ່ສື່ສານ**

16.1 ສຳນັກງານກົງສຸນກິດຕິມະສັກມີສິດນຳໃຊ້ພາຫະນະຕິດຕໍ່ສື່ສານທຳມະດາເຊັ່ນ: ຈົດໝາຍ, ອຸປະກອນສື່ສານເອເລັກໂຕຼນິກ, ໂທລະສັບ, ໂທລະເລກ, ໂທລະສານ ແລະ ອື່ນໆໂດຍຜ່ານລະບົບໄປສະນີ, ໂທລະຄົມມະນາຄົມຂອງ ສປປ ລາວ.

16.2 ສຳນັກງານກົງສຸນກິດຕິມະສັກມີສິດນຳໃຊ້ຖົງເມກົງສຸນ, ຜູ້ສົ່ງຖົງເມກົງສຸນ, ລະບົບສື່ສານກົດລັບເພື່ອຕິດຕໍ່ກັບສຳນັກງານການທູດ, ສຳນັກງານກົງສຸນອາຊີບກໍ່ຄືສຳນັກງານກົງສຸນກິດຕິມະສັກ ແລະ ລັດຖະບານຂອງລັດທີ່ສົ່ງກໍ່ຕໍ່ເມື່ອໄດ້ຮັບການອະນຸຍາດ ຈາກລັດຖະບານ ແຫ່ງ ສປປ ລາວ.

**ມາດຕາ 17. ເສລີພາບໃນການສັນຈອນໄປ-ມາ**

ສະມາຊິກຂອງສຳນັກງານກົງສຸນກິດຕິມະສັກມີເສລີພາບໃນການສັນຈອນໄປ-ມາໃນດິນແດນຂອງ ສປປ ລາວ, ຍົກເວັ້ນເຂດຫວງຫ້າມ.

**ມາດຕາ 18. ການນຳໃຊ້ທຸງຊາດຂອງລັດທີ່ສົ່ງ**

ສຳນັກງານກົງສຸນກິດຕິມະສັກມີສິດຕິດຕັ້ງທຸງຊາດ ແລະເຄື່ອງໝາຍຊາດຂອງລັດທີ່ສົ່ງຢູ່ຕາມສະຖານທີ່ກົງສຸນກິດຕິມະສັກ ແລະເຮືອນພັກຂອງຫົວໜ້າສຳນັກງານກົງສຸນກິດຕິມະສັກ.

**ມາດຕາ 19. ສິດທີ່ທີ່ລ່ວງລະເມີດບໍ່ໄດ້ຕໍ່ບັນນະສານ ແລະເອກະສານກົງສຸນ.**

ບັນນະສານ ແລະເອກະສານຂອງສຳນັກງານກົງສຸນກິດຕິມະສັກແມ່ນຖືກລ່ວງລະເມີດບໍ່ໄດ້ບໍ່ວ່າເວລາໃດ ແລະ ສະຖານທີ່ໃດກໍ່ຕາມ, ແຕ່ຕ້ອງໃຫ້ບັນນະສານ ແລະເອກະສານເຫລົ່ານັ້ນແຍກອອກຈາກເຈັ້ຍ ແລະເອກະສານອື່ນໆ, ໂດຍສະເພາະຈາກຈົດໝາຍສ່ວນຕົວຂອງຫົວໜ້າສຳນັກງານກົງສຸນກິດຕິມະສັກ ແລະຂອງທຸກບຸກຄົນທີ່ເຮັດວຽກກັບຜູ້ກ່ຽວ ກໍ່ຄືຈາກຊັບສິນ ແລະ ປື້ມອ່ານ ຫລື ເອກະສານທີ່ກ່ຽວກັບການປະກອບອາຊີບ ຫລືວຽກການຄ້າຂອງຜູ້ກ່ຽວ.

**ມາດຕາ20. ການຄຸ້ມກັນຈາກອຳນາດຕຸລາການ ແລະການປົກຄອງ**

ພະນັກງານກົງສຸນກິດຕິມະສັກຈະໄດ້ຮັບການຄຸ້ມກັນຈາກອຳນາດຕຸລາການ ແລະອຳນາດການປົກຄອງຂອງ ສປປ ລາວ ແລະໄດ້ຮັບສິດທີ່ທີ່ລ່ວງລະເມີດບໍ່ໄດ້ທາງດ້ານຮ່າງກາຍສະເພາະທຸກການກະທຳທີ່ພົວພັນເຖິງການປະຕິບັດໜ້າທີ່ທາງການເທົ່ານັ້ນ. ແຕ່ຂໍ້ກຳນົດຂອງມາດຕານີ້ຈະໃຊ້ບໍ່ໄດ້ໃນເມື່ອຫາກເປັນກໍລະນີຄະດີແພ່ງ

- ອັນເນື່ອງຈາກການເຮັດສັນຍາອັນໃດອັນໜຶ່ງຂອງພະນັກງານກົງສຸນກິດຕິມະສັກ, ຊຶ່ງຜູ້ກ່ຽວບໍ່ໄດ້ເຮັດຂຶ້ນຕາມການມອບສິດຂອງລັດທີ່ສົ່ງ; ຫລື
- ຊຶ່ງແມ່ນບຸກຄົນທີ່ສາມເປັນຜູ້ກ່າວຟ້ອງຍ້ອນມີການເສຍຫາຍ ອັນເນື່ອງມາຈາກອຸບັດຕິເຫດຈາກການສັນຈອນຢູ່ພາຍໃນ ສປປ ລາວ.

**ມາດຕາ 21. ພັນທະໃຫ້ການເປັນພະຍານ**

ສະມາຊິກສຳນັກງານກົງສຸນກິດຕິມະສັກ ອາດຖືກຮຽກຕົວໄປໃຫ້ການໃນຖານະເປັນພະຍານໃນເວລາມີການພິຈາລະນາຄວາມ, ແຕ່ຈະບໍ່ຖືກບັງຄັບໃຫ້ການກ່ຽວກັບສິ່ງທີ່ພົວພັນກັບການປະຕິບັດໜ້າທີ່ຂອງເຂົາເຈົ້າ.

**ມາດຕາ 22. ການຍົກເວັ້ນພາສີ, ອາກອນນຳເຂົ້າ**

ສຳນັກງານກົງສຸນກິດຕິມະສັກຈະໄດ້ຮັບອະນຸຍາດນຳເຂົ້າ ສປປ ລາວ ພ້ອມທັງຍົກເວັ້ນພາສີ, ອາກອນ ແລະ ຄ່າທຳນຽມທີ່ກ່ຽວຂ້ອງອື່ນໆ ເວັ້ນເສຍແຕ່ຈະເປັນຄ່າຝາກສາງ, ຄ່າຂົນສົ່ງ ແລະຄ່າບໍລິການຮັບໃຊ້ຕ່າງໆໃນລັກສະນະດຽວກັນ, ແຕ່ຕ້ອງແມ່ນສິ່ງຂອງທີ່ຈະນຳມາໃຊ້ໃນທາງການສະເພາະຂອງສຳນັກງານກົງສຸນກິດຕິມະສັກ. ສິ່ງຂອງເຫລົ່ານັ້ນມີ: ເຄື່ອງໝາຍ, ທຸງ, ປ້າຍ, ກາປະທັບ, ປື້ມອ່ານ, ເຈັ້ຍພິມທາງການ, ອຸປະກອນເຄື່ອງໃຊ້ປະຈຳຫ້ອງການ ແລະສິ່ງຂອງປະເພດດຽວກັນ ຊຶ່ງລັດທີ່ສົ່ງເປັນຜູ້ສົ່ງມາໃຫ້ ຫລືຕາມການສະເໜີຂອງສຳນັກງານກົງສຸນກິດຕິມະສັກ. ແຕ່ການນຳເຂົ້າສິ່ງຂອງດັ່ງກ່າວຕ້ອງໄດ້ປະຕິບັດຕາມຂັ້ນຕອນຂອງລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 23. ການຍົກເວັ້ນອາກອນຄ່າທຳນຽມກົງສຸນ**

ສຳນັກງານກົງສຸນກິດຕິມະສັກໄດ້ຮັບອະນຸຍາດໃຫ້ເກັບຄ່າທຳນຽມກົງສຸນຕາມການກຳນົດຂອງລັດທີ່ສົ່ງ ແລະ ໄດ້ຮັບການຍົກເວັ້ນອາກອນຄ່າທຳນຽມກົງສຸນຈາກລັດຖະບານ ແຫ່ງ ສປປ ລາວ.

**ມາດຕາ 24. ສະມາຊິກຄອບຄົວຂອງພະນັກງານກົງສຸນກິດຕິມະສັກ**

ສະມາຊິກຄອບຄົວຂອງພະນັກງານກົງສຸນກິດຕິມະສັກຈະບໍ່ໄດ້ຮັບບັນດາອະພິສິດ ແລະ ການຄຸ້ມກັນ.

**ມາດຕາ 25. ການເລີ່ມມີຜົນບັງຄັບໃຊ້ ແລະການສິ້ນສຸດຂອງອະພິສິດ ແລະການຄຸ້ມກັນ**

ບັນດາອະພິສິດ ແລະ ການຄຸ້ມກັນທີ່ພະນັກງານກົງສຸນກິດຕິມະສັກໄດ້ຮັບຕາມຂໍ້ກຳນົດຂອງດຳລັດສະບັບນີ້ເລີ່ມມີຜົນບັງຄັບໃຊ້ເມື່ອກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ໄດ້ຮັບແຈ້ງການເລີ່ມປະຕິບັດໜ້າທີ່ຂອງພະນັກງານກົງສຸນກິດຕິມະສັກເປັນຕົ້ນໄປ ແລະ ຈະສິ້ນສຸດລົງໃນເວລາຜູ້ກ່ຽວສິ້ນສຸດການປະຕິບັດໜ້າທີ່ຂອງຕົນ.

**ມາດຕາ 26. ການບອກເລີກອະພິສິດ ແລະການຄຸ້ມກັນ**

ລັດທີ່ສົ່ງອາດບອກເລີກບັນດາອະພິສິດ ແລະການຄຸ້ມກັນຂອງພະນັກງານກົງສຸນກິດຕິມະສັກຜູ້ໃດຜູ້ໜຶ່ງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ແຕ່ການບອກເລີກຕ້ອງກະທຳແຕ່ລະເທື່ອຢ່າງຈະແຈ້ງ.

**ມາດຕາ 27. ການເຄົາລົບລະບຽບກົດໝາຍຂອງ ສປປ ລາວ**

ພະນັກງານກົງສຸນກິດຕິມະສັກທີ່ໄດ້ຮັບອະພິສິດ ແລະ ການຄຸ້ມກັນດັ່ງທີ່ໄດ້ກຳນົດໃນດຳລັດສະບັບນີ້ມີໜ້າທີ່:

27.1 ເຄົາລົບລະບຽບກົດໝາຍກໍ່ຄືຮີດຄອງປະເພນີ ແລະວັດທະນາທຳຂອງ ສປປ ລາວ;

27. 2 ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງ ສປປ ລາວ;

27. 3 ສະຖານທີ່ກົງສຸນກິດຕິມະສັກ ແລະ ເຮືອນພັກຂອງພະນັກງານກົງສຸນກິດຕິມະສັກ ຈະບໍ່ໃຫ້ໃຊ້ໃນທຳນອງທີ່ບໍ່ສອດຄ່ອງກັບການປະຕິບັດໜ້າທີ່ການກົງສຸນ.

**ມາດຕາ 28. ການສິ້ນສຸດໜ້າທີ່ຂອງພະນັກງານກົງສຸນກິດຕິມະສັກ**

ໜ້າທີ່ຂອງພະນັກງານກົງສຸນກິດຕິມະສັກຈະສິ້ນສຸດລົງໃນກໍລະນີດັ່ງລຸ່ມນີ້:

28.1 ພາຍຫລັງທີ່ລັດຖະບານ ແຫ່ງ ສປປ ລາວ ໄດ້ຮັບການແຈ້ງຢ່າງເປັນທາງການຈາກລັດທີ່ສົ່ງກ່ຽວກັບການສິ້ນສຸດໜ້າທີ່ຂອງຜູ້ກ່ຽວ;

28.2 ບໍ່ປະຕິບັດຕາມຂໍ້ກຳນົດຂອງດຳລັດສະບັບນີ້;

28.3 ລະເມີດກົດໝາຍຂອງ ສປປ ລາວ ຢ່າງຮ້າຍແຮງ;

28.4 ເມື່ອລັດຖະບານ ແຫ່ງ ສປປ ລາວ ໄດ້ແຈ້ງໃຫ້ລັດທີ່ສົ່ງຊາບຢ່າງເປັນທາງການກ່ຽວກັບການຢຸດຕິຮັບຮູ້ຜູ້ກ່ຽວໃນຖານະກົງສຸນກິດຕິມະສັກ;

28.5 ເມື່ອຫນັງສືຮັບຮອງກົງສຸນຂອງຜູ້ກ່ຽວຖືກຖອນ;

28.6 ພາຍຫລັງລັດຖະບານ ແຫ່ງ ສປປ ລາວໄດ້ແຈ້ງໃຫ້ລັດທີ່ສົ່ງຊາບວ່າບຸກຄົນດັ່ງກ່າວໄດ້ຖືກປະກາດເປັນບຸກຄົນທີ່ບໍ່ເພິ່ງປາດຖະຫນາ( persona non grata ). ຖ້າມີກໍລະນີເຊັ່ນນີ້ເກີດຂຶ້ນ, ລັດທີ່ສົ່ງຕ້ອງງົດຫນ້າທີ່ຂອງຜູ້ກ່ຽວຕາມກໍານົດເວລາທີ່ລັດຖະບານ ແຫ່ງ ສປປ ລາວ ໄດ້ແຈ້ງໃຫ້ຊາບນັ້ນ;

28.7 ໃນບັນດາກໍລະນີທີ່ໄດ້ລະບຸໄວ້ໃນຂໍ້ 28.4, 28.5 ແລະ 28.6 ຂ້າງເທິງ, ລັດຖະບານ ແຫ່ງ ສປປ ລາວ ໃນຖານະລັດທີ່ຮັບບໍ່ຈໍາເປັນຕ້ອງແຈ້ງເຫດຜົນໃນການຕັດສິນໃຈຂອງຕົນໃຫ້ລັດທີ່ສົ່ງຊາບ.

## ຫມວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 29. ການຈັດຕັ້ງປະຕິບັດ

ກະຊວງການຕ່າງປະເທດ ແລະທຸກພາກສ່ວນທີ່ກ່ຽວຂ້ອງມີຫນ້າທີ່ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 30. ຜົນສັກສິດ

ດໍາລັດສະບັບນີ້ມີຜົນສັກສິດນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ